ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 17 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 26 ເມສາ 2016

ສຳນັກງານ ຄຄຊ
ຮັບ
ເລກທີ 0376
ວັນທີ 26 APR 2016
ໂທລະສັບ 021 217770

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 04/04/2016 ຫາ 08/04/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນໜຸ່ນທ່ຽງ ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາອ່ອນຄ່າລົງ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງອັດຕາການວ່າງງານຂອງ ສ.ອາເມລິກາ ເພີ່ມຂຶ້ນ ເປັນ 5% ໃນເດືອນ 3/2016 ຈາກ 4,9% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 29/03/2016 | ອາທິດນີ້ 05/04/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1189 | 1,1377 | -1,65% |
| ໂດລາ/ເຢນ | 113,54 | 110,69 | 2,58% |
| ໂດລາ/ບາດ | 35,38 | 35,31 | 0,18% |
| ໂດລາ/ເປໂຊ | 46,31 | 46,21 | 0,20% |
| ໂດລາ/ຣູເປັຍ | 13.385,00 | 13.207,00 | 1,35% |
| ໂດລາ/ໂດລາສິງກະໂປ | 1,3683 | 1,3555 | 0,94% |
| ໂດລາ/ຢວນ | 6,5091 | 6,4718 | 0,58% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກຫຼຸດລົງ 7,72% ຈາກ 40,83 ໂດລາ/ບາເຣວ ມາເປັນ 37,68 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງ ສ. ອາເມລິກາ ຫຼຸດລົງ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບອາທິດທີ 25/3/2016 ເພີ່ມຂຶ້ນ 2,29 ລ້ານໂດລາ. ສ່ວນລາຄາຄຳໃນຕະຫຼາດໂລກເພີ່ມຂຶ້ນ 0,64% ຈາກ 1.218,96 ມາເປັນ 1.226,73 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,02% ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,27% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,30% ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,34% ສໍາລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,39% ສໍາລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,83% ສໍາລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,36% ສໍາລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,18% ສໍາລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 29/03/2016 | | | ອາທິດນີ້ 05/04/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | |
| ໂດລາ | 8.119,47 | 8.145,00 | 8.122,89 | 8.112,28 | 8.140,66 | 8.121,46 | 0,09% | 0,05% | 0,02% |
| ບາດ | 230,50 | 232,18 | 232,14 | 230,09 | 231,82 | 231,46 | 0,18% | 0,16% | 0,30% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.137,75 | 8.174,33 | 8.156,04 | 8.121,85 | 8.146,10 | 8.133,98 | 0,20% | 0,35% | 0,27% |
| ບາດ | 231,94 | 232,90 | 232,42 | 231,00 | 232,26 | 231,63 | 0,41% | 0,28% | 0,34% |
| ຜົດຕ່າງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,23% | 0,36% | 0,41% | 0,12% | 0,07% | 0,15% | | | |
| ບາດ | 0,62% | 0,31% | 0,12% | 0,40% | 0,19% | 0,08% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈໍາອາທິດນີ້ຫຼຸດລົງ 2,27% ທຽບໃສ່ວັນທີ 01/04/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,49%;
- ປະລິມານເງິນ M2 ຫຼຸດລົງ 0,57% ເມື່ອທຽບໃສ່ວັນທີ 01/03/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,31%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈໍາອາທິດ (ວັນທີ 04/04/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 186,42 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 229,23 ລ້ານໂດລາ ແລະ ຂາຍໂດລາໄດ້ 42,81 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 6.528,71 ລ້ານບາດ (ໃນນີ້ ຊື້ບາດໄດ້ 315,94 ລ້ານບາດ ແລະ ຂາຍບາດໄດ້ 6.844,65 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາຫຼຸດລົງ 22,74% ແລະ ຫຼຸດລົງ 26,28% ສໍາລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 0,90 ລ້ານໂດລາ ແລະ ເງິນບາດມີຈໍານວນ 104,32 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທຫກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 25,89 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 10 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນໍ້າໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈຳນວນ 173,74 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈຳນວນ 5.993,93 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 29/03/2016 | | ອາທິດທີ 04/04/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1, ການຊື້ເງິນຕາຕ່າງປະເທດ** | **300,93** | **494,79** | **229,23** | **315,94** | **-23,83%** | **-36,15%** |
| - ທ/ຄທຸລະກິດລັດ | 21,40 | 233,66 | 15,39 | 184,68 | -28,09% | -20,96% |
| - ທ/ຄທຸລະກິດອື່ນໆ | 279,53 | 261,13 | 213,84 | 131,26 | -23,50% | -49,74% |
| **2, ການຂາຍເງິນຕາຕ່າງປະເທດ** | **51,18** | **9.218,90** | **42,81** | **6.844,65** | **-16,36%** | **-25,75%** |
| - ທ/ຄທຸລະກິດລັດ | 12,13 | 218,19 | 18,07 | 165,21 | 48,94% | -24,28% |
| - ທ/ຄທຸລະກິດອື່ນໆ | 39,05 | 9.000,71 | 24,74 | 6.679,44 | -36,64% | -25,79% |
| **ຊື້-ຂາຍສຸດທິ ທທກ** | **249,75** | **-8.724,11** | **186,42** | **-6.528,71** | **-25,36%** | **-25,16%** |
| ຜິດດ່ຽງ ຊື້-ຂາຍ | 82,99% | -1.763,19% | 81,32% | -2.066,46% | | |
| ມູນຄ່າການຊື້-ຂາຍ | **352,12** | **9.713,69** | **272,04** | **7.160,59** | **-22,74%** | **-26,28%** |
| **3, ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-15,35** | **0,00** | **-25,89** | **10,00** | | |
| - ທຫລ ຊື້ຈາກ ທທກ | 6,00 | 0,00 | 0,00 | 10,00 | | |
| - ທຫລ ຂາຍໃຫ້ ທທກ | 21,35 | 0,00 | 25,89 | 0,00 | | |
| **4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **1,81** | **83,70** | **0,90** | **104,32** | | |
| **5, ທຫລ ກັບ ພາກສ່ວນ ອື່ນໆ** | **-259,89** | **7.325,44** | **-173,74** | **5.993,93** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 4,47 | 7.325,44 | 0,08 | 5.993,93 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 264,35 | 0,00 | 173,82 | 0,00 | | |

2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 04/2016 ຢູ່ໃນລະດັບ 1,19% (ຕົວເລກຄາດຄະເນ) ເພີ່ມຂຶ້ນ 0,06% ຈາກ 1,13% ໃນເດືອນ 03/2016 ສາເຫດຍ້ອນຄາດວ່າຄວາມຕ້ອງການບໍລິໂພກສິນຄ້າ ເປັນຕົ້ນແມ່ນປະເພດອາຫານສົດຈະເພີ່ມຂຶ້ນໃນໄລຍະບຸນປີໃໝ່ລາວ.

2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 260,64 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 9,9% ທຽບໃສ່ອາທິດຜ່ານມາ.

2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 946 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ 12% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 724,63 ຕື້ກີບ ຫຼຸດລົງ 13,62% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (01-07/04/2016) ມີຈຳນວນ 2.349 ຄັ້ງ ໂດຍມີມູນຄ່າ 567 ຕື້ກີບ ຫຼຸດລົງ 13,43% ຊຶ່ງທະນາຄານພັດທະນາລາວ ເຮັດທຸລະກຳຫຼາຍກວ່າໝູ່ຈຳນວນ 609 ຄັ້ງ.

## 2.7 ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.142,81 ຈຸດ, ຫຼຸດລົງ 1,53% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 71.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 369,02 ລ້ານກີບ, ຫຼຸດລົງ 80,59% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 23,28% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.296 ກີບ/ຮຸ້ນ, ຫຼຸດລົງ 4 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 24.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 106,54 ລ້ານກີບ, ຫຼຸດລົງ 85,69% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 27,92% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,32%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.725 ກີບ/ຮຸ້ນ, ຫຼຸດລົງ 55 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 44.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 254,75 ລ້ານກີບ, ຫຼຸດລົງ 69,97% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 19,97% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາສະເລ່ຍ 5.900 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,36 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.650 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,65 ລ້ານກີບ, ຫຼຸດລົງ 99,14% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,72 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສໍາເລັດການເປັນປະທານ ແລະ ເຈົ້າພາບ ຈັດກອງປະຊຸມຂັ້ນສູງອາຊຽນ ແລະ ອາຊຽນ+3 ຂອງ ສປປ ລາວ (ກອງປະຊຸມລັດຖະມົນຕີການເງິນອາຊຽນ ຄັ້ງທີ 20, ກອງປະຊຸມຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 12, ກອງປະຊຸມລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ ຄັ້ງທີ 2 ແລະ ກອງປະຊຸມປີ່ນອ້ອມຕ່າງໆ);
- ສໍາເລັດການຕິດຕັ້ງລະບົບ Mail Server ສໍາລັບ LAPS ຮ່ວມກັບພະແນກຄຸ້ມຄອງລະບົບເຄືອຂ່າຍ ແລະ ເຄື່ອງແມ່ຂ່າຍ ແລະ ນໍາລະບົບດັ່ງກ່າວຂຶ້ນທົດລອງນໍາໃຊ້ຜ່ານລະບົບອິນເຕີເນັດ;

---

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດ ສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສໍາລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສໍາລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

- ສຳເລັດການຈັດກອງປະຊຸມ: ❶ກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ມີນາ 2016 ທີ່ ທຫລ, ❷ກອງປະຊຸມວຽກງານກວດກາ ປະຈຳປີ 2015 ແລະ ມອບ-ຮັບໃບຢັ້ງຢືນໃຫ້ບັນດາໜ່ວຍພັກທີ່ໄດ້ຮັບນາມມະຍົດເປັນໜ່ວຍພັກເຂັ້ມແຂງ-ຮູ້ນຳພາຮອບດ້ານ ປະຈຳປີ 2015 ທີ່ ສະຖາບັນການທະນາຄານ;
- ສຳເລັດການລາຍງານກ່ຽວກັບການນຳໃຊ້ Facebook ເພື່ອເພີ່ມການປະຊາສຳພັນ ໂຄງການ AFP ໃຫ້ຫຼາຍຂຶ້ນ;
- ສຳເລັດການເຂົ້າຮ່ວມກອງປະຊຸມ ແລະ ຝຶກອົບຮົມ: ❶ກອງປະຊຸມປຶກສາກ່ຽວກັບການຂະຫຍາຍຄວາມຊ່ວຍເຫຼືອໃນການສ້າງຄວາມເຂັ້ມແຂງທາງດ້ານວິຊາການໃຫ້ແກ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ອອກໄປຍັງແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ ທີ່ຫ້ອງປະຊຸມຂອງອົງການ DGRV, ❷ຝຶກອົບຮົມ ໃນຫົວຂໍ້: "Financial Intelligence for Banking and Financial Institutions ທີ່ປະເທດ ສິງກາ;
- ສຳເລັດການຕ້ອນຮັບແຂກຈາກສະຖານທູດຝຣັ່ງ ທ່ານ Philippe CHATIGNOUX ທີ່ປຶກສາດ້ານເສດຖະກິດ ແລະ ທັງເປັນຫົວໜ້າພະແນກເສດຖະກິດ-ການຄ້າຝຣັ່ງ ທີ່ນະຄອນຫຼວງວຽງຈັນ ແລະ ພະນົມເປັນ, ເພື່ອສົນທະນາກ່ຽວກັບວຽກງານ AML/CFT.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດທີ 5 ຊຸດ 2 ປະເພດໃບ 2.000 ກີບໃໝ່ ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ ຄົ້ນຄວ້າດ້ານເນື້ອໃນກ່ຽວກັບວຽກງານ AML/CFT ເພື່ອຈັດກອງປະຊຸມຮ່ວມກັບກົມຕຳຫຼວດເສດຖະກິດ, ກະຊວງປ້ອງກັນຄວາມສະຫງົບ ໃນຫົວຂໍ້: ກອງປະຊຸມດ້ານວິຊາການກ່ຽວກັບບົດລາຍງານຂໍ້ມູນຂ່າວກອງທາງດ້ານການເງິນ (Financial Intelligence Report "FIR"), ❷ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❸ ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❹ສືບຕໍ່ປັບປຸງໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນຂ່າວສານສິນເຊື່ອ, ❺ຄົ້ນຄວ້າກ່ຽວກັບການສ້າງລະບົບ AML/CFT ທີ່ທັນສະໄໝ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຮອງຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ອຸດຕະລາ ແກ້ວທາວົງ